Implemented by


Photo credit: © GIZ Laos / CliPAD

# ການປະກາດຮັບບົດສະເໜີໂຄງການ ທຶນສົມທົບ ປະຈຳປີ 2026

## ກອງທຶນສົ່ງເສີມທຸລະກິດກະສິກຳ (MGFA)

ຄູ່ມື ສຳລັບ ຜູ້ສະໝັກ

# ຄູ່ມື ສຳລັບ ຜູ້ສະໝັກ

ຄູ່ມືຄຳແນະນຳສຳລັບຜູ້ສະໝັກ ປີ 2026 ສະບັບນີ້ ແມ່ນຈະຊ່ວຍສະໜັບສະໜູນໃຫ້ຜູ້ທີ່ສະໝັກສາມາດຕື່ມແບບຟອມສະໝັກເພື່ອຂໍທຶນສົມທົບນຳກອງທຶນສົ່ງເສີມທຸລະກິດກະສິກຳ. ດັ່ງນັ້ນ, ຄູ່ມືນີ້ຄວນໃຊ້ຄວບຄູ່ກັບແບບຟອມ. ແບບຟອມ ແລະ ຄຳແນະນຳ ໃຫ້ຖືວ່າເປັນສ່ວນໜຶ່ງຂອງປະກາດເປີດຮັບສະໝັກ ບົດສະເໜີໂຄງການທຶນສົມທົບ ອີງຕາມໜັງສືປະກາດ/ແຈ້ງການສະບັບເລກທີ່ 3077/ກປມ, ລົງວັນທີ່ 26 ພຶດສະພາ 2026 ອອກໂດຍ ກົມປ່າໄມ້ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

## ໝາຍເຫດທີ່ສຳຄັນ

### 1. ຂໍ້ຄວນລະວັງກ່ອນການຕື່ມແບບຟອມ

ອ່ານປະກາດເປີດຮັບສະໝັກ ບົດສະເໜີໂຄງການທຶນສົມທົບ 2026 ແລະ ພາບລວມຂອງເງື່ອນໄຂກອງທຶນສົມທົບ (MGFA), ພ້ອມທັງຂະບວນການສະໝັກ ແລະ ການຄັດເລືອກຢ່າງລະອຽດ ເພື່ອໃຫ້ເຂົ້າໃຈ ຈຸດປະສົງຂອງໂຄງການ, ເງື່ອນໄຂຜູ້ສະໝັກ, ຈຸດປະສົງຂອງທຶນສົມທົບ ແລະ ການສະໜັບສະໜູນດ້ານວິຊາການ.

### 2. ວິທີການໃຊ້ຄູ່ມືນີ້

ຄູ່ມືສະບັບນີ້ແມ່ນມີໂຄງສ້າງ ແລະ ໄດ້ກຳນົດໝາຍເລກຄືກັນກັບແບບຟອມສະໝັກ, ຄູ່ມືນີ້ຈະອະທິບາຍວິທີການຕື່ມ-ຕອບຄຳຖາມຢ່າງລະອຽດ. ສະນັ້ນ, ຂໍໃຫ້ທ່ານກະລຸນາຕື່ມຂໍ້ມູນໃນແບບຟອມສະໝັກໃຫ້ຄົບຖ້ວນເທົ່າທີ່ຈະເປັນໄປໄດ້ ແລະ ຕາມຄວາມເຂົ້າໃຈຂອງທ່ານ.

### 3. ການປະກອບແບບຟອມສະໝັກ

ການປະກອບແບບຟອມສະໝັກ ເພື່ອຄວາມເໝາະສົມທີ່ສຸດ ຄວນປະກອບແບບຟອມສະໝັກຜ່ານຄອມພິວເຕີ ໂດຍນຳໃຊ້ໄຟລ໌ PDF ທີ່ທາງໂຄງການໄດ້ກຳນົດໃຫ້. ໃນກໍລະນີທີ່ທ່ານຕ້ອງການຂຽນດ້ວຍມື, ກະລຸນາພິມ (Print) ແບບຟອມເປົ່າອອກມາ, ແຕ່ຕ້ອງຈັດສັນພື້ນທີ່ຫວ່າງໃຫ້ພຽງພໍສຳລັບການຕອບຄຳຖາມ. ທັງນີ້, ສຳລັບການຂຽນດ້ວຍມື, ຂໍຄວາມກະລຸນາຂຽນໃຫ້ຊັດເຈນ ແລະ ອ່ານງ່າຍ. ທັງຈະໃຊ້ຄອມພິວເຕີປະກອບ ຫຼື ຂຽນດ້ວຍມືຖ້າຫາກພື້ນທີ່ໃນໃບສະໝັກບໍ່ພຽງພໍ, ທ່ານສາມາດຂຽນຄຳຕອບໃສ່ເຈ້ຍຕ່າງຫາກແລ້ວຄັດຕິດເພີ່ມເຕີມມາພ້ອມກັນໄດ້.

### 4. ເອກະສານສະໜັບສະໜູນ/ເອກະສານຊ້ອນທ້າຍ

ຜູ້ສະໝັກຕ້ອງປະກອບເອກະສານຊ້ອນທ້າຍ ຕິດຄັດກັບບົດສະເໜີໂຄງການເຊັ່ນ: 1. ສຳເນົາໃບທະບຽນວິສາຫະກິດ, 2. ໃບອະນຸຍາດດຳເນີນກິດຈະກຳກະສິກຳ ແລະ ສິງແວດລ້ອມ. 3. ລາຍລະອຽດຂອງງົບປະມານການລົງທຶນ (ຕາມຟາຍລ ເອັກເຊວ) ແລະ 4. ລາຍລະອຽດໄລຍະເວລາຂອງການລົງທຶນ (ຕາມຟາຍລ ເອັກເຊວ)

# I. ຂໍ້ມູນການດຳເນີນທຸລະກິດ

## 1.1 ຊື່ບໍລິສັດ

ກາລຸນາຂຽນຊື່ຂອງບໍລິສັດໃຫ້ຖືກຕາມໃບທະບຽນວິສາຫະກິດ ທີ່ອອກໃຫ້ໂດຍ ກົມຄຸ້ມຄອງທະບຽນ ແລະ ວິສາຫະກິດ ຂອງກະຊວງອຸດສາຫະກຳ-ການຄ້າ. ໃບທະບຽນຕ້ອງມີຊື່ພາສາລາວ ແລະ ອັງກິດ.

## 1.2 ຮູບແບບທາງກົດໝາຍ

**ວັນທີ ຂຶ້ນທະບຽນວິສາຫະກິດ (MoIC):**
ກາລຸນາຂຽນ (ວັນທີ, ເດືອນ, ປີ) ໃຫ້ຖືກຕາມໃບທະບຽນວິສາຫະກິດ ທີ່ອອກໃຫ້ໂດຍ ກົມຄຸ້ມຄອງທະບຽນ ແລະ ວິສາຫະກິດ

**ໃບທະບຽນວິສາຫະກິດ (MoIC):**
ກະລຸນາຕື່ມເລກທະບຽນຕາມທີ່ປາກົດຢູ່ໃນໃບທະບຽນທຸລະກິດຂອງທ່ານທີ່ອອກໃຫ້ໂດຍ ຄຸ້ມຄອງກົມ ທະບຽນ ແລະ ການວິສາຫະກິດ

**ເລກໃບອະນຸຍາດດຳເນີນທຸລະກິດ (MAE):**
ກະລຸນາຕື່ມເລກທີ່ຕາມໃບອະນຸຍາດດຳເນີນທຸລະກິດທີ່ອອກໃຫ້ໂດຍ ພະແນກກະສິກຳ ແລະ ສິ່ງແວດລ້ອມ ຫຼື ຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມເມືອງ ຕາມທີ່ສະແດງຢູ່ໃນເອກະສານໃບອະນຸຍາດດຳເນີນທຸລະກິດຂອງທ່ານ. ທ່ານອາດຈະມີໃບອະນຸຍາດດຳເນີນທຸລະກິດທີ່ແຕກຕ່າງກັນ; ຢ່າງໃດກໍ່ຕາມ, ຄຳຖາມນີ້ໝາຍເຖິງໃບອະນຸຍາດທີ່ກ່ຽວຂ້ອງກັບກິດຈະກຳທຸລະກິດກະສິກຳຂອງທ່ານໂດຍສະເພາະ.

**ວັນທີ ອອກໃບອະນຸຍາດ (MAE):**
ກະລຸນາຕື່ມວັນທີອອກໃບອະນຸຍາດດຳເນີນທຸລະກິດໃນປັດຈຸບັນຂອງທ່ານທີ່ອອກໂດຍ ພະແນກກະສິກຳ ແລະ ສິ່ງແວດລ້ອມ ຫຼື ຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມເມືອງ. ໝາຍເຫດ: ຄຳຖາມນີ້ໝາຍເຖິງວັນທີຂອງໃບອະນຸຍາດດຳເນີນທຸລະກິດໃບລ່າສຸດທີ່ທ່ານມີ.

**ວັນທີເລີ່ມດຳເນີນກິດຈະການຕົວຈິງ:**
ກະລຸນາລະບຸວັນທີທີ່ທ່ານເລີ່ມຕົ້ນການດຳເນີນທຸລະກິດກະສິກຳຂອງທ່ານ. ວັນທີນີ້ອາດແຕກຕ່າງຈາກວັນທີຂອງໃບອະນຸຍາດດຳເນີນທຸລະກິດ ຫຼື ໃບທະບຽນທຸລະກິດຂອງທ່ານ, ຍ້ອນວ່າກິດຈະກຳທຸລະກິດ ຂອງທ່ານ ອາດຈະເລີ່ມຕົ້ນກ່ອນ ຫຼື ຫຼັງຈາກທີ່ໄດ້ຮັບໃບອານຸຍາດ.

**ກຳນົດພັນທະພາສີ-ອາກອນ ແລະ ຊຳລະອາກອນທີ່ຄ້າງຈ່າຍ:**
ກະລຸນາຢືນຢັນວ່າໜ່ວຍງານພາສີໄດ້ກຳນົດພາສີໃຫ້ທ່ານ ແລະ ທ່ານໄດ້ເສຍພາສີທີ່ຕ້ອງຈ່າຍແລ້ວ, ບໍ່ວ່າຈະຄິດໄລ່ຕາມກຳໄລ ຫຼື ໂດຍການຈ່າຍແບບມອບເໝົາ. ບໍ່ວ່າທ່ານຈະຈ່າຍດ້ວຍລະບົບໃດກໍຕາມ, ກະລຸນາໝາຍຕິກ 'ແມ່ນແລ້ວ' ຖ້າພາສີຖືກຄິດໄລ່ ແລະ ທ່ານໄດ້ເສຍພາສີແລ້ວ.

**ມີກາປະທັບບໍລິສັດ ທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງ:**
ຄຳຖາມນີ້ແມ່ນການຖາມເພື່ອຢັ້ງຢືນວ່າທ່ານໄດ້ຮັບໃບອານຸຍາດການໃຊ້ກາປະທັບຂອງບໍລິສັດຂອງທ່ານແລ້ວຫຼືບໍ່.

## 1.3 ທີ່ຢູ່ຂອງບໍລິສັດ

ຄຳຖາມນີ້ຖາມຫາທີ່ຢູ່ຂອງສຳນັກງານໃຫຍ່ທີ່ຈົດທະບຽນຂອງບໍລິສັດຂອງທ່ານ, ເຖິງແມ່ນວ່າການດຳເນີນງານຂອງທ່ານຈະຕັ້ງຢູ່ບ່ອນອື່ນກໍຕາມ. ກະລຸນາລະບຸອີເມວ ແລະ ເບີໂທລະສັບທີ່ສາມາດໃຊ້ເພື່ອສື່ສານຢ່າງເປັນທາງການກັບ ໜ່ວຍງານປະສານງານ MGFA ແລະ ຕົວແທນໂຄງການ.

# I. ຂໍ້ມູນການດຳເນີນທຸລະກິດ

## 1.4 ຊື່ເຈົ້າຂອງກິດຈະການ ແລະ ຂໍ້ມູນຕິດຕໍ່

ພາກນີ້ ຂໍຂໍ້ມູນກ່ຽວກັບເຈົ້າຂອງທຸລະກິດ ແລະ ຝ່າຍບໍລິຫານຂອງບໍລິສັດ, ລວມທັງລາຍລະອຽດເບີຕິດຕໍ່. ກະລຸນາໃສ່ຊື່ຂອງຜູ້ຖືຫຸ້ນທັງໝົດ. ຖ້າບໍລິສັດຂອງທ່ານເປັນບໍລິສັດຫຸ້ນສ່ວນ, ໃຫ້ລະບຸຊື່ເຈົ້າຂອງຫຸ້ນທີ່ກ່ຽວຂ້ອງທັງໝົດ ແລະ ເບີຕິດຕໍ່ຂອງຜູ້ອຳນວຍການ. ຖ້າບໍລິສັດຂອງທ່ານຈົດທະບຽນເປັນບໍລິສັດຈຳກັດຜູ້ດຽວທີ່ບໍ່ມີລະບົບການຈັດຕັ້ງຄະນະກຳມະການ, ໃຫ້ໃສ່ຊື່ຂອງຜູ້ຈັດການ ຫຼື ເຈົ້າຂອງໃບທະບຽນຕາມທີ່ຢູ່ໃນໃບທະບຽນວິສາຫະກິດ.

## 1.5 ພະນັກງານ

ກະລຸນາລະບຸຈຳນວນພະນັກງານສຳລັບແຕ່ລະປະເພດດັ່ງຕໍ່ໄປນີ້:

- ພະນັກງານເຮັດວຽກເຕັມເວລາ: ໝາຍເຖິງພະນັກງານທີ່ເຮັດວຽກ 30-40 ຊົ່ວໂມງ/ອາທິດ ຫຼື 130-150 ຊົ່ວໂມງຕໍ່ເດືອນ.
- ພະນັກງານເຮັດວຽກບາງເວລາ: ໝາຍເຖິງພະນັກງານທີ່ເຮັດວຽກ 2-3 ຊົ່ວໂມງ/ມື້ ຫຼື ເຮັດວຽກໜ້ອຍກວ່າ 30 ຊົ່ວໂມງ/ອາທິດ.
- ທີ່ປຶກສາ: ແມ່ນຜູ້ທີ່ໃຫ້ຄຳແນະນຳຈາກຜູ້ຊ່ຽວຊານຢ່າງເປັນມືອາຊີບໃຫ້ແກ່ບໍລິສັດຂອງທ່ານ, ເຊິ່ງທ່ານອາດຈ່າຍຄ່າແຮງງານເປັນຊົ່ວໂມງ ຫຼື ມື້.
- ອາສາສະໝັກ: ໝາຍເຖິງຜູ້ທີ່ເຮັດວຽກໃຫ້ບໍລິສັດຂອງທ່ານໂດຍບໍ່ໄດ້ຮັບຄ່າຈ້າງ ແລະ ຫຼື ໄດ້ເງິນອຸດໜູນເລັກນ້ອຍ.

**ການປະຕິບັດສອດຄ່ອງຕາມ ກົດໝາຍວ່າດ້ວຍແຮງງານ**

ພາກນີ້ຖາມກ່ຽວກັບການປະຕິບັດຕາມກົດໝາຍແຮງງານ, ຕົວຢ່າງ: ສັນຍາຈ້າງງານເປັນລາຍລັກອັກສອນສຳລັບພະນັກງານປະຈຳ; ການນຳໃຊ້ຄ່າຈ້າງຂັ້ນຕໍ່າ; ສິດໃນການລາພັກ; ແລະອື່ນໆ.

**ການປະຕິບັດຕາມ ກົດໝາຍວ່າດ້ວຍການປະກັນສັງຄົມແຫ່ງຊາດ**

ຂໍ້ນີ້ຖາມກ່ຽວກັບການປະຕິບັດຕາມກົດໝາຍວ່າດ້ວຍປະກັນສັງຄົມ, ໂດຍສະເພາະຖ້າທຸລະກິດກະສິກຳຂອງທ່ານໄດເຂົ້າກັບອົງການປະກັນສັງຄົມແຫ່ງຊາດ, ໄດ້ເຮັດປະກັນໄພໃຫ້ພະນັກງານ ແລະ ຈ່າຍເງິນປະກັນສັງຄົໃຫ້ພະນັກງານແຕ່ລະຄົນບໍ

**ພະນັກງານທີ່ເຂົ້າໃຈການຈັດຊື້-ຈັດຈ້າງຂັ້ນພື້ນຖານ:**

ຄຳຖາມນີ້ແມ່ນຖາມເພື່ອກຳນົດວ່າຢ່າງໜ້ອຍບໍລິສັດຂອງທ່ານຕ້ອງມີພະນັກງານໜຶ່ງຄົນຮູ້ຈັກຂັ້ນຕອນການຈັດຊື້-ຈັດຈ້າງ ເພື່ອຮັບປະກັນວ່າການຊື້ສິນຄ້າ ຫຼື ການບໍລິການແມ່ນເຮັດຢ່າງໂປ່ງໃສ ແລະ ມີປະສິດທິພາບ, ຕົວຢ່າງເຊັ່ນ: ໂດຍຜ່ານການສົມທຽບລາຄາ ແລະ ຄຸນນະພາບ ຫຼື ການດຳເນີນຂະບວນການປະມູນຜ່ານສາທາລະນະ.

## 1.6 ປະເພດວິສາຫະກິດ

ມີໂຄງສ້າງທາງກົດໝາຍທາງທຸລະກິດດັ່ງຕໍ່ໄປນີ້:

- ວິສາຫະກິດສ່ວນບຸກຄົນ: ທຸລະກິດທີ່ຈົດທະບຽນໃນນາມຂອງບຸກຄົນ, ບໍ່ແມ່ນບໍລິສັດຈຳກັດ.
- ບໍລິສັດຈຳກັດ: ບໍລິສັດທີ່ຈົດທະບຽນຢ່າງຖືກຕ້ອງຕາມກົດໝາຍທີ່ເປັນເຈົ້າຂອງໂດຍຜູ້ຖືຫຸ້ນໜຶ່ງຄົນ ຫຼື ຫຼາຍຄົນ, ມີຄວາມຮັບຜິດຊອບຈຳກັດ.
- ວິສາຫະກິດຂອງລັດ: ບໍລິສັດທີ່ລັດຖະບານເປັນເຈົ້າຂອງ ແລະ ດຳເນີນການທັງໝົດ ຫຼື ບາງສ່ວນ.
- ຫຸ້ນສ່ວນ: ທຸລະກິດໃນນາມຂອງບຸກຄົນສອງຄົນ ຫຼື ຫຼາຍກວ່ານັ້ນ, ຜູ້ທີ່ແບ່ງປັນລາຍໄດ້ ແລະ ຊັບສິນດ້ວຍສັດສ່ວນຫຸ້ນເທົ່າກັນ ຫຼື ແຕກຕ່າງກັນ.

# I. ຂໍ້ມູນການດຳເນີນທຸລະກິດ

## 1.7 ການຄຸ້ມຄອງ

ຄຳຖາມນີ້ແມ່ນຖາມເພື່ອໃຫ້ຮູ້ວ່າພາກສ່ວນໃດທີ່ມີສ່ວນໃນການບໍລິຫານການຄຸ້ມຄອງ.
ຜູ້ຈັດຕັ້ງປະຕິບັດການດຳເນີນງານທຸລະກິດຂອງທ່ານ

## 1.8 ການເປັນສະມາຊິກຂອງອົງການຈັດຕັ້ງ

ກະລຸນາລະບຸອົງກອນທີ່ທຸລະກິດກະສິກຳຂອງທ່ານເປັນສະມາຊິກ, ເຊັ່ນ: ສະມາຄົມ, ສະພາການຄ້າ ແລະ ອຸດສາຫະກຳແຂວງ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ສະພາການຄ້າສາກົນ ຫຼື ສະພາການຄ້າອື່ນໆ.

## 1.9 ນະໂຍບາຍ ຂອງກອງທຶນສະພາບອາກາດສີຂຽວ ກ່ຽວກັບການປະຕິບັດທີ່ຫ້າມ

ກອງທຶນ GCF ແມ່ນຕົວຫຍໍ້ຂອງກອງທຶນສະພາບອາກາດສີຂຽວ, ເຊິ່ງເປັນຜູ້ໃຫ້ທຶນຫຼັກຂອງໂຄງການ SU-I-GFLM, ລວມທັງໂຄງການທຶນສົມທົບ. GCF ມີນະໂຍບາຍເພື່ອຮັບປະກັນວ່າບໍ່ໃຫ້ມີທຸລະກິດ ຫຼື ກິດຈະກຳໃດໆທີ່ໄດ້ຮັບທຶນຈາກ GCF ຈະມີສ່ວນຮ່ວມໃນພຶດຕິກຳໃດໆທີ່ໄດ້ກ່າວມາ. ກະລຸນາອ່ານບັນລາຍຊື່ຂອງການປະຕິບັດທີ່ຕ້ອງຫ້າມ ແລະ ພິຈາລະນາວ່າທຸລະກິດຂອງທ່ານປະຕິບັດຕາມແຕ່ລະຂໍ້ທີ່ຫ້າມທີ່ແຕກຕ່າງກັນຫຼືບໍ່

## 1.10 ການນຳໃຊ້ລະບົບບັນຊີ

ຖ້າຫາກລະບົບການບັນຊີທຸລະກິດຂອງທ່ານນຳໃຊ້ນັ້ນ ໄດ້ປະຕິບັດຕາມ ກົດໝາຍວ່າດ້ວຍການບັນຊີ, ກະລຸນາໝາຍຕິກໃສ່ຫ້ອງ "ແມ່ນ". ຖ້າບໍ່ແມ່ນ, ກະລຸນາໝາຍຕິກໃສ່ຫ້ອງ "ບໍ່ແມ່ນ" ແລະ ເລືອກເອົາໜຶ່ງໃນຄຳຕອບທີ່ກຳນົດໃຫ້ລຸ່ມນີ້:

- ການນຳໃຊ້ໂປຣແກຣມບັນຊີ: ໝາຍເຖິງ ທຸລະກິດຂອງທ່ານນຳໃຊ້ໂປຣແກຣມຄອມພິວເຕີ ທີ່ຖືກອອກແບບມາເພື່ອຈຸດປະສົງທາງດ້ານການບໍລິຫານ ແລະ ການບັນຊີໂດຍສະເພາະ ແຕ່ບໍ່ໄດ້ອີງຕາມກົດໝາຍວ່າດ້ວຍບັນຊີ.
- ການນຳໃຊ້ໂປຣແກຣມທົ່ວໄປ: ໝາຍເຖິງ ທຸລະກິດຂອງທ່ານນຳໃຊ້ຄອມພິວເຕີ ເພື່ອເຮັດວຽກບໍລິຫານ ແລະ ບັນຊີ ໂດຍຜ່ານໂປຣແກຣມທົ່ວໄປ ທີ່ບໍ່ໄດ້ຖືກອອກແບບມາເພື່ອວຽກງານບໍລິຫານ ຫຼື ການບັນຊີໂດຍກົງ ເຊັ່ນ: MS Word ແລະ Excel.
- ອື່ນໆ: ໝາຍເຖິງ ທຸລະກິດຂອງທ່ານນຳໃຊ້ລະບົບການບໍລິຫານ ແລະ ບັນຊີໃນຮູບແບບອື່ນ, ເປັນຕົ້ນແມ່ນ ການນຳໃຊ້ລະບົບຈົດບັນທຶກໃສ່ປຶ້ມ ຫຼື ເຈ້ຍ.
- ບໍ່ມີລະບົບການບໍລິຫານ ຫຼື ບັນຊີ : ໝາຍເຖິງ ທຸລະກິດຂອງທ່ານບໍ່ມີການນຳໃຊ້ລະບົບການຈັດຕັ້ງທີ່ເປັນລະບຽບ ເພື່ອສະຫຼຸບລາຍງານທຸລະກຳທາງດ້ານການເງິນ ແລະ ວັດຖຸສິ່ງຂອງທັງໝົດຂອງທຸລະກິດ.

# I. ຂໍ້ມູນການດຳເນີນທຸລະກິດ

## 1.11 ທຸລະກິດ ແລະ ການຕະຫຼາດ ຫຼັກຂອງທ່ານແມ່ນຫຍັງ?

ໃນຄຳຖາມນີ້, ພວກເຮົາພະຍາຍາມສຶກສາເພື່ອເຂົ້າໃຈກ່ຽວກັບບົດບາດສຳຄັນ ຫຼື ຕຳແໜ່ງຫຼັກຂອງທຸລະກິດຂອງທ່ານ ບາງບໍລິສັດອາດຈະມີຫຼາຍບົດບາດ ຫຼື ດຳເນີນກິດຈະການຫຼາຍກວ່າໜຶ່ງສິນຄ້າ. ກະລຸນາໝາຍຕິກເອົາບັນດາທຸລະກິດລວມກັນແລ້ວສາມາດສ້າງລາຍຮັບ 80% ຂອງທຸລະກິດທັງໝົດ.

ນອກຈາກການໝາຍຕິກໃສ່ປະເພດທຸລະກິດທີ່ກຳນົດໃຫ້ແລ້ວ, ທ່ານຍັງສາມາດອະທິບາຍກ່ຽວກັບຮູບແບບທຸລະກິດຂອງທ່ານຕາມຄວາມເຂົ້າໃຈຂອງທ່ານເອງ. ຕົວຢ່າງຄື: ວິທີການສ້າງລາຍໄດ້, ການກຳນົດຕະຫຼາດ ແລະ ກຸ່ມຜູ້ຊື້, ການຕະຫຼາດ, ການຂາຍ, ການເຮັດສັນຍາ, ການສົ່ງມອບສິນຄ້າ ແລະ ຂັ້ນຕອນການຮັບຊຳລະເງິນ. ນອກຈາກນັ້ນ, ກະລຸນາລະບຸລາຍລະອຽດກ່ຽວກັບການເກັບຮັກສາ, ການປຸງແຕ່ງ (ແປຮູບ), ການບັນຈຸພັນ ແລະ ການຂົນສົ່ງ, ລວມທັງຂໍ້ມູນວ່າທ່ານຂາຍສິນຄ້າພາຍໃນປະເທດລາວ ຫຼື ສົ່ງອອກໄປຕ່າງປະເທດ. ພ້ອມກັນນີ້, ກະລຸນາໃຫ້ຂໍ້ມູນກ່ຽວກັບ ຊື່, ປະເທດຕົ້ນທາງ ແລະ ປະເພດທຸລະກິດຂອງຜູ້ຊື້ຫຼັກຂອງທ່ານ ເຊິ່ງແມ່ນກຸ່ມທີ່ສ້າງລາຍຮັບໃຫ້ທ່ານລວມກັນຢ່າງໜ້ອຍ 80%.

## 1.12 ທຸລະກິດທ່ານ ມີບົດບາດແນວໃດໃນການຜະລິດກະສິກຳແບບຍືນຍົງຕໍ່ສິ່ງແວດລ້ອມ, ເປັນມິດກັບສະພາບອາກາດ ແລະ ບໍ່ມີການຕັດໄມ້ທຳລາຍປ່າ

ກະລຸນາອະທິບາຍຕາມຄວາມເຂົ້າໃຈຂອງທ່ານເອງ ກ່ຽວກັບຄວາມຮັບຮູ້ໃນປັດຈຸບັນຕໍ່ກັບ ການຜະລິດກະສິກຳແບບຍືນຍົງຕໍ່ສິ່ງແວດລ້ອມ, ການເປັນມິດກັບສະພາບເງື່ອນໄຂທຳມະຊາດ (ດິນຟ້າອາກາດ) ແລະ/ຫຼື ການຜະລິດທີ່ບໍ່ທຳລາຍປ່າໄມ້. ພ້ອມທັງລະບຸວ່າ ທ່ານໄດ້ນຳເອົາຮູບແບບການຜະລິດເຫຼົ່ານີ້ ເຂົ້າມາໝູນໃຊ້ໃນຮູບແບບທຸລະກິດຂອງທ່ານຄືແນວໃດ (ຖ້າມີ).

## 1.13 ປະເພດສິນຄ້າກະສິກຳ ແລະ ຕ່ອງໂສ້ມູນຄ່າ

ເນື້ອໃນສ່ວນນີ້ແມ່ນເພື່ອໃຫ້ເຂົ້າໃຈວ່າ ທຸລະກິດຂອງທ່ານມີການສະໜອງພືດຊະນິດໃດ ຫຼື ດຳເນີນກິດຈະການໃນຕ່ອງໂສ້ມູນຄ່າໃດແດ່. ກະລຸນາລະບຸສະເພາະປະເພດພືດ ຫຼື ຕ່ອງໂສ້ມູນຄ່າທີ່ສ້າງລາຍຮັບໃຫ້ທຸລະກິດຂອງທ່ານລວມກັນໄດ້ 80%.

**ຄຳຖາມທີໜຶ່ງ**: ແມ່ນເພື່ອພິຈາລະນາວ່າ ທຸລະກິດຂອງທ່ານດຳເນີນກິດຈະການຢູ່ໃນປະເພດສິນຄ້າກະສິກຳຂອງໂຄງການ ທີ່ໄດ້ລະບຸໄວ້ໃນ 'ລາຍຊື່ບັນຊີຂາວ' (Whitelist) ຫຼື ບໍ່. ກະລຸນາສຶກສາລາຍລະອຽດສິນຄ້າກະສິກຳທີ່ລະບຸໃນບັນຊີຂາວ (Whitelist) ເຊິ່ງໄດ້ຄັດຕິດມານຳ 'ຄູ່ມືການຈັດຕັ້ງປະຕິບັດກອງທຶນສົມທົບ (MGFA)' ແລະ 'ໜັງສືແຈ້ງການເຊື້ອເຊີນຍື່ນເອກະສານຂໍຮັບທຶນໂຄງການ.

**ຄຳຖາມທີສອງ**: ແມ່ນຖາມກ່ຽວກັບປະເພດສິນຄ້າກະສິກຳທີ່ທ່ານຈັດຊື້ ຫຼື ກຳລັງດຳເນີນການຢູ່. ກະລຸນາລະບຸສະເພາະອັນທີ່ສ້າງລາຍຮັບໃຫ້ທ່ານລວມກັນໄດ້ 80%.

**ຄຳຖາມທີສາມ**: ແມ່ນຖາມກ່ຽວກັບວິທີການຈັດຊື້/ສະໜອງປັດໃຈ (ຖ້າມີ):

- ຊື້ໂດຍກົງຈາກຊາວກະສິກອນ: ໝາຍເຖິງ ທ່ານມີສາຍພົວພັນໂດຍກົງກັບຊາວກະສິກອນທີ່ທ່ານຊື້ສິນຄ້ານຳ.
- ຊື້ຈາກຊາວກະສິກອນຜ່ານຕົວແທນ: ໝາຍເຖິງ ທ່ານມີຕົວແທນທີ່ເຮັດວຽກໃຫ້ທ່ານ ເພື່ອຈັດຊື້ ແລະ ເກັບໂຮມຜົນຜະລິດຈາກຊາວກະສິກອນ.
- ຊື້ຜ່ານພໍ່ຄ້າຄົນກາງ: ໝາຍເຖິງ ທ່ານຊື້ຈາກພໍ່ຄ້າຄົນກາງທີ່ເປັນເອກະລາດ ເຊິ່ງເຂົາເຈົ້າເປັນຜູ້ໄປຮັບຊື້ຈາກຊາວກະສິກອນ ແລ້ວນຳມາຂາຍຕໍ່ໃຫ້ທຸລະກິດຂອງທ່ານ.
- ບໍ່ມີການຈັດຊື້ເລີຍ: ໝາຍເຖິງ ທ່ານບໍ່ໄດ້ມີການຈັດຊື້ສິນຄ້າກະສິກຳໃດໆຈາກຊາວກະສິກອນ (ສິນຄ້າກະສິກຳແມ່ນທ່ານເປັນຜູ້ຜະລິດເອງ) ເພື່ອມາເປັນປັດໄຈການຜະລິດ.

**ຄຳຖາມທີສີ່**: ແມ່ນຖາມກ່ຽວກັບຈຳນວນຊາວກະສິກອນ ຫຼື ຄົວເຮືອນ ທີ່ທຸລະກິດຂອງທ່ານໄດ້ຮັບຊື້ຜົນຜະລິດນຳ.

**ຄຳຖາມທີຫ້າ**: ແມ່ນເພື່ອເຂົ້າໃຈວ່າ ສິນຄ້າກະສິກຳທີ່ທຸລະກິດຂອງທ່ານຈັດຊື້ນຳຊາວກະສິກອນນັ້ນ ໄດ້ຖືກປູກຕາມຫຼັກການທີ່ເປັນມິດກັບດິນຟ້າອາກາດ ແລະ/ຫຼື ປາສະຈາກການທຳລາຍປ່າໄມ້ ຫຼື ບໍ່

# I. ຂໍ້ມູນການດຳເນີນທຸລະກິດ

## 1.14 ເຂດພື້ນທີ່ການດຳເນີນງານ

ເນື້ອໃນສ່ວນນີ້ ແມ່ນເພື່ອໃຫ້ເຂົ້າໃຈວ່າ ທຸລະກິດຂອງທ່ານມີການຈັດຊື້ສິນຄ້າກະສິກຳຈາກຊາວກະສິກອນ ທີ່ອາໄສ ແລະ ດຳເນີນການຜະລິດຢູ່ໃນບັນດາເມືອງເປົ້າໝາຍຂອງໂຄງການ ຫຼື ບໍ່. ກະລຸນາສຶກສາລາຍລະອຽດທັງໝົດຂອງບັນດາເມືອງເປົ້າໝາຍຂອງໂຄງການທີ່ຕິດຄັດໃນເອກະສານຊ້ອນທ້າຍ "ຄູ່ມືຈັດຕັ້ງປະຕິບັດກອງທຶນສົມທົບ MGFA ກ່ຽວກັບເງື່ອນໄຂ, ມາດຕະຖານການຄັດເລືອກ ແລະ ຂັ້ນຕອນການສະໝັກ " ພ້ອມດ້ວຍກັບເອກະສານເຊີນຊວນຍື່ນຂໍສະເໜີໂຄງການ. ກະລຸນາລະບຸລາຍຊື່ບັນດາເມືອງເປົ້າໝາຍທັງໝົດ ທີ່ທ່ານໄດ້ມີການຈັດຊື້ພືດພັນນຳ.

## 1.15 ຄວາມສຳພັນກັບຊາວກະສິກອນ

ເນື້ອໃນສ່ວນນີ້ແມ່ນເພື່ອເຂົ້າໃຈກ່ຽວກັບຮູບແບບການຮ່ວມມືທາງດ້ານວັດຖຸ ຫຼື ເຕັກນິກ ທີ່ທຸລະກິດຂອງທ່ານມີຮ່ວມກັບຊາວກະສິກອນ (ຖ້າມີ). ກະລຸນາໝາຍຕິກໃສ່ຫ້ອງທີ່ກົງກັບສະພາບຄວາມເປັນຈິງຂອງທຸລະກິດທ່ານ. ທຸລະກິດຂອງທ່ານອາດມີການລົງທຶນຮ່ວມ ຫຼື ມີສ່ວນຮ່ວມໃນການເພີ່ມຜົນຜະລິດຂອງຊາວກະສິກອນ ໂດຍຜ່ານການຊ່ວຍເຫຼືອດ້ານໂຄງລ່າງພື້ນຖານ, ປັດໄຈການຜະລິດ, ສິນເຊື່ອ ແລະ/ຫຼື ການຊ່ວຍເຫຼືອທາງດ້ານເຕັກນິກ.

ຖ້າຫາກທຸລະກິດຂອງທ່ານບໍ່ໄດ້ສະໜອງປັດໄຈການຜະລິດ ຫຼື ການບໍລິການໃດໆໃຫ້ແກ່ຊາວກະສິກອນ, ຫຼື ບໍ່ໄດ້ຈັດຊື້ຜົນຜະລິດຈາກຊາວກະສິກອນ, ກະລຸນາເລືອກ "ບໍ່ມີ" . ສຳລັບການບໍລິການທັງໝົດ, ກະລຸນາໝາຍຕິກລະບຸວ່າທ່ານໄດ້ເກັບຄ່າບໍລິການນຳຊາວກະສິກອນ ຫຼື ບໍ່ (ບໍ່ວ່າຈະເປັນການຫັກລົບຈາກລາຄາຜົນຜະລິດທີ່ຮັບຊື້ ຫຼື ຮູບແບບອື່ນໆ), ຫຼື ທ່ານໄດ້ສະໜອງໃຫ້ເຂົາເຈົ້າໂດຍບໍ່ເສຍຄ່າ.

## 1.16 ສາຍພົວພັນທາງດ້ານພັນທະສັນຍາກັບຊາວກະສິກອນ

ເນື້ອໃນສ່ວນນີ້ ແມ່ນເພື່ອສ້າງຄວາມເຂົ້າໃຈກ່ຽວກັບລັກສະນະຂອງສາຍພົວພັນທາງດ້ານພັນທະສັນຍາ ທີ່ທຸລະກິດຂອງທ່ານມີຮ່ວມກັບຊາວກະສິກອນ.

**ຄຳຖາມທຳອິດ**: ແມ່ນເພື່ອສຶກສາວ່າ ສາຍພົວພັນດັ່ງກ່າວເປັນແບບຊົ່ວຄາວ (ຊື້-ຂາຍເປັນຄັ້ງຄາວ) ຫຼື ເປັນແບບມີໂຄງຮ່າງການຮ່ວມມືທີ່ຊັດເຈນ ແລະ ຕໍ່ເນື່ອງມາເປັນເວລາຫຼາຍປີ.

**ຄຳຖາມທີສອງ**: ແມ່ນເພື່ອໃຫ້ເຂົ້າໃຈວ່າ ສັນຍານັ້ນໄດ້ຖືກຕົກລົງກັນດ້ວຍປາກເປົ່າ, ເປັນລາຍລັກອັກສອນ (ມີເອກະສານຢັ້ງຢືນ), ຫຼື ສ້າງຕັ້ງຂຶ້ນຜ່ານຕົວແທນທີ່ເຮັດວຽກໃຫ້ບໍລິສັດຂອງທ່ານ.

ນອກຈາກນີ້, ຍັງມີເນື້ອທີ່ວ່າງໄວ້ໃຫ້ທ່ານເພື່ອອະທິບາຍລາຍລະອຽດເພີ່ມເຕີມ ກ່ຽວກັບສາຍພົວພັນທາງດ້ານພັນທະສັນຍາຂອງທ່ານ.

## 1.17 ການຢັ້ງຢືນມາດຕະຖານທຸລະກິດ

ກະລຸນາລະບຸວ່າ ທຸລະກິດຂອງທ່ານໄດ້ຮັບການຢັ້ງຢືນມາດຕະຖານທຸລະກິດໃດໜຶ່ງຕາມລາຍຊື່ທີ່ລະບຸໄວ້ ຫຼື ບໍ່ ໂດຍການໝາຍຕິກໃສ່ປະເພດໃບຢັ້ງຢືນມາດຕະຖານທຸລະກິດທີ່ທ່ານມີ ຫຼື ໝາຍຕິກໃສ່ຫ້ອງ "ບໍ່ມີ". ໃນກໍລະນີທີ່ທ່ານໄດ້ຮັບການຢັ້ງຢືນມາດຕະຖານປະເພດອື່ນໆ ທີ່ບໍ່ມີຢູ່ໃນລາຍຊື່ປະເພດມາດຕະຖານທຸລະກິດທີ່ລະບຸ, ກະລຸນາໝາຍຕິກໃສ່ຫ້ອງ "ອື່ນໆ" ແລະ ອະທິບາຍປະເພດຂອງໃບຢັ້ງຢືນມາດຕະຖານທີ່ທ່ານໄດ້ຮັບ.

# I. ຂໍ້ມູນການດຳເນີນທຸລະກິດ

## 1.18 ການນຳໃຊ້ບັນຊີທະນາຄານ

ກະລຸນາລະບຸວ່າ ທຸລະກິດຂອງທ່ານໄດ້ນຳໃຊ້ບັນຊີທະນາຄານ ເພື່ອເຮັດທຸລະກຳທາງດ້ານການເງິນຂອງທຸລະກິດ ຫຼື ບໍ່. ຖ້າມີ, ກະລຸນາລະບຸວ່າ ບັນຊີດັ່ງກ່າວແມ່ນໃນນາມຊື່ຂອງທຸລະກິດ ຫຼື ໃນນາມຊື່ບຸກຄົນ (ບັນຊີສ່ວນຕົວ).

ໃນກໍລະນີທີ່ທຸລະກິດຂອງທ່ານມີການນຳໃຊ້ບັນຊີທະນາຄານ, ກະລຸນາໝາຍຕິກໃສ່ຫ້ອງທີ່ກົງກັບສະພາບການນຳໃຊ້ຕົວຈິງຂອງທຸລະກິດທ່ານ, ລວມທັງລະບຸເປີເຊັນ (%) ຂອງລາຍຮັບ ແລະ ລາຍຈ່າຍ ຜ່ານລະບົບທະນາຄານ.

ສຸດທ້າຍນີ້, ໃນກໍລະນີທີ່ທຸລະກິດຂອງທ່ານໄດ້ຮັບການຄັດເລືອກເພື່ອຮັບທຶນສົມທົບ, ອາດຈະມີເງື່ອນໄຂໃຫ້ທ່ານເປີດບັນຊີທະນາຄານໃໝ່ ເພື່ອນຳໃຊ້ສະເພາະວຽກງານທຶນສົມທົບດັ່ງກ່າວເທົ່ານັ້ນ. ກະລຸນາລະບຸວ່າ ທ່ານມີຄວາມພ້ອມທີ່ຈະປະຕິບັດຕາມເງື່ອນໄຂນີ້ໄດ້ ຫຼື ບໍ່.

## 1.19 ການຄຸ້ມຄອງ ແລະ ໂຄງຮ່າງການຈັດຕັ້ງ

ກະລຸນາອະທິບາຍຕາມຄວາມເຂົ້າໃຈຂອງທ່ານເອງ. ພວກເຮົາພະຍາຍາມສຶກສາເພື່ອໃຫ້ຮູ້ວ່າ ເຈົ້າຂອງທຸລະກິດ ແລະ ຜູ້ບໍລິຫານຫຼັກແມ່ນໃຜ, ບົດບາດ ແລະ ຄວາມຮັບຜິດຊອບມີຫຍັງແດ່, ວຽກງານທີ່ເຂົາເຈົ້າປະຕິບັດໃນແຕ່ລະມື້ແມ່ນຫຍັງ ແລະ ສາຍພົວພັນໃນການເຮັດວຽກລະຫວ່າງກັນນັ້ນເປັນຄືແນວໃດ.

ນອກຈາກນັ້ນ, ພວກເຮົາຕ້ອງການເຂົ້າໃຈກ່ຽວກັບ ພະນັກງານ ແລະ ບຸກຄົນອື່ນໆ ທີ່ເຮັດວຽກໃຫ້ກັບທຸລະກິດຂອງທ່ານວ່າ: ໜ້າທີ່ຫຼັກຂອງເຂົາເຈົ້າແມ່ນຫຍັງ, ມີປະສົບການ ຫຼື ຊ່ຽວຊານດ້ານໃດ, ເຂົາເຈົ້າໄດ້ຮ່ວມເຮັດວຽກກັບທ່ານມາເປັນເວລາດົນປານໃດແລ້ວ ແລະ ອື່ນໆ.

## 1.20 ສະຖານະພາບທາງດ້ານການເງິນ

ກະລຸນາສະໜອງຂໍ້ມູນປັດຈຸບັນໂດຍຫຍໍ້ ກ່ຽວກັບຊັບສິນຂອງທຸລະກິດ, ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍປະຈຳປີ ຫຼ້າສຸດ.

ຊັບສິນຂອງທຸລະກິດ: ແມ່ນລວມເອົາທຸກຊັບສິນທີ່ນຳໃຊ້ເຂົ້າໃນການດຳເນີນທຸລະກິດ ເປັນຕົ້ນແມ່ນ: ທີ່ດິນ ແລະ ສິ່ງປຸກສ້າງ, ອຸປະກອນ ແລະ ເຄື່ອງຈັກ, ພາຫະນະ, ສິນຄ້າໃນສາງ, ໃບເກັບເງິນທີ່ຄ້າງຮັບ, ເງິນໃນບັນຊີທະນາຄານຂອງທຸລະກິດ ແລະ ເງິນສົດ. ຖ້າເປັນໄປໄດ້, ກະລຸນາລະບຸມູນຄ່າການຫຼຸ້ຍຫ້ຽນລວມຂອງຊັບສິນທີ່ກຳລັງນຳໃຊ້ຢູ່ ຫຼື ລະບຸປີທີ່ຄາດວ່າຈະມີການປ່ຽນແທນ/ຊື້ຊັບສິນໃໝ່.

ໜີ້ສິນ: ແມ່ນພັນທະໜີ້ສິນຕ່າງໆ ບໍ່ວ່າຈະເປັນ ໜີ້ຄ້າງຊຳລະຕໍ່ຜູ້ສະໜອງປັດໄຈການຜະລິດ (ລວມທັງຊາວກະສິກອນ), ເງິນກູ້ຢືມຈາກທະນາຄານ, ຫຼື ຄ່າງວດທີ່ຄ້າງຊຳລະສຳລັບການຊື້ອຸປະກອນ, ເຄື່ອງຈັກ ຫຼື ພາຫະນະ.
ລາຍຮັບ ແລະ ລາຍຈ່າຍ: ກະລຸນາສະໜອງບົດສະຫຼຸບພາບລວມຂອງສົກປີການດຳເນີນງານທີ່ເຕັມປີ ແລະ ຫຼ້າສຸດ

# II. ບົດສະເໜີການລົງທຶນ / ໂຄງການ

## 2.1 ຊັບສິນທີ່ສ້າງມູນຄ່າ, ປັດໄຈການຜະລິດ ຫຼື ການບໍລິການ ໃນການລົງທຶນ ແລະ ຜົນໄດ້ຮັບ

ກະລຸນາຊ່ວຍໃຫ້ພວກເຮົາເຂົ້າໃຈກ່ຽວກັບແຜນການລົງທຶນຂອງທ່ານ ໂດຍການອະທິບາຍສິ່ງທີ່ທ່ານຕ້ອງການລົງທຶນ ແລະ ຜົນຜະລິດທີ່ຈະໄດ້ຮັບຈາກຊັບສິນ, ປັດໄຈການຜະລິດ ຫຼື ການບໍລິການດັ່ງກ່າວ. ກະລຸນາອະທິບາຍຄາດໝາຍຜົນໄດ້ຮັບຂອງການລົງທຶນໃຫ້ກວ້າງຂວາງເທົ່າທີ່ຈະເປັນໄປໄດ້, ເປັນຕົ້ນແມ່ນ: ຈຳນວນຊາວກະສິກອນທີ່ຈະຮັບຊື້ຜົນຜະລິດ, ປະລິມານ ຫຼື ຄຸນນະພາບຂອງປັດໄຈການຜະລິດທີ່ຈຳເປັນ; ການປ່ຽນແປງໃນຂະບວນການຜະລິດເພື່ອສ້າງມູນຄ່າເພີ່ມ, ຕະຫຼາດ ແລະ ກຸ່ມລູກຄ້າ; ຜົນກະທົບຕໍ່ລະດັບ ຫຼື ລະບົບການຜະລິດທີ່ມີຄວາມຍືນຍົງທາງດ້ານສິ່ງແວດລ້ອມ ແລະ ອື່ນໆ. ພວກເຮົາຂໍແນະນຳໃຫ້ທ່ານພັນລະນາການລົງທຶນໂດຍເນັ້ນໃສ່ການບັນລຸຕາມຈຸດປະສົງຂອງໂຄງການເປັນຫຼັກ.

## 2.2 ງົບປະມານ

ພວກເຮົາຈະປະເມີນ ແລະ ເຮັດຄວາມເຂົ້າໃຈກ່ຽວກັບ ຍອດລວມງົບປະມານທັງໝົດ ທີ່ຈຳເປັນສຳລັບການລົງທຶນ ແລະ ຍອດລວມຂອງລາຍຈ່າຍ ທີ່ຖືກຕ້ອງຕາມເງື່ອນໄຂຂອງການລົງທຶນດັ່ງກ່າວ. ຢູ່ໃນເອກະສານພາບລວມຂອງມາດຖານການຄັດເລືອກ, ຂັ້ນຕອນການສະໝັກ ແລະ ການຄັດເລືອກຂອງ ກອງທຶນສົມທົບ (ເຊິ່ງເປັນເອກະສານຄັດຕິດມານຳ ແຈ້ງການເຊີນຍື່ນບົດສະເໜີໂຄງການ) ໄດ້ລະບຸລາຍລະອຽດກ່ຽວກັບປະເພດການລົງທຶນ ແລະ ລາຍຈ່າຍທີ່ຖືກຕ້ອງຕາມເງື່ອນໄຂໄວ້ຢ່າງຊັດເຈນ. ພວກເຮົາຂໍແນະນຳໃຫ້ທ່ານສຶກສາລາຍລະອຽດເພີ່ມເຕີມ ໂດຍສະເພາະແມ່ນໃນຫົວຂໍ້ທີ 5.2, 5.3 ແລະ 5.4 ເນື່ອງຈາກມີເນື້ອໃນສຳຄັນກ່ຽວກັບລາຍຈ່າຍທີ່ສາມາດລວມເຂົ້າໃນງົບປະມານການລົງທຶນ ທີ່ຈະໄດ້ຮັບການສະໜັບສະໜູນຈາກກອງທຶນສົມທົບ. ທັງນີ້, ທ່ານສາມາດນຳໃຊ້ ແບບຟອມງົບປະມານການລົງທຶນ (ຮູບແບບ Excel) ທີ່ທາງໂຄງການໄດ້ສະໜອງໃຫ້ ເພື່ອຊ່ວຍໃນການແຍກລາຍລະອຽດ ແລະ ຄິດໄລ່ງົບປະມານ

ໃນແບບຟອມງົບປະມານ, ກະລຸນາລະບຸລາຍລະອຽດຂອງລາຍການລົງທຶນ (ສິ່ງທີ່ທ່ານຕ້ອງການຊື້) ໃນຊ່ອງທີ 2; ໃນຊ່ອງທີ 3 ໃຫ້ລະບຸລາຄາທີ່ທ່ານຕ້ອງຈ່າຍສຳລັບລາຍການລົງທຶນດັ່ງກ່າວ ຕາມສະກຸນເງິນທີ່ຊື້ຕົວຈິງ; ໃນຊ່ອງທີ 4 ແມ່ນຈຳນວນອາກອນມູນຄ່າເພີ່ມ (VAT); ໃນຊ່ອງທີ 5 ແມ່ນລາຄາສຸດທິທີ່ທ່ານຕ້ອງຈ່າຍສຳລັບລາຍການລົງທຶນ ຕາມສະກຸນເງິນທີ່ຊື້ຕົວຈິງ; ໃນຊ່ອງທີ 6 ແມ່ນອັດຕາແລກປ່ຽນເພື່ອຄິດໄລ່ລາຄາສຸດທິໃຫ້ເປັນສະກຸນເງິນ (ກີບ) ເຊິ່ງຈະສະແດງຜົນໃນຊ່ອງທີ 7. ສຳລັບຊ່ອງທີ 8 ແມ່ນໃຫ້ລະບຸວັນທີຂອງລາຄາທີ່ໄດ້ສະເໜີມາ ແລະ ໃຫ້ລະບຸວ່າທ່ານໄດ້ຮັບໃບສະເໜີລາຄາເປັນລາຍລັກອັກສອນ ຫຼື ເປັນພຽງການຕົກລົງດ້ວຍວາຈາ. ງົບປະມານດັ່ງກ່າວຄວນລວມເອົາທຸກລາຍຈ່າຍທີ່ຈຳເປັນສຳລັບການລົງທຶນ ແລະ ໃຫ້ແຍກລາຍຈ່າຍທີ່ຖືວ່າຖືກຕ້ອງຕາມລະບຽບ. ສ່ວນລາຍຈ່າຍ ຫຼື ການຊຳລະບໍ່ນອນຢູ່ໃນເງື່ອນໄຂຂອງທຶນສົມທົບ ແມ່ນສາມາດລະບຸໄວ້ໃນແຖວທີ 5 ພາຍໃຕ້ຫົວຂໍ້ 'ລາຍຈ່າຍທີ່ບໍ່ສອດຄ່ອງກັບການລົງທຶນ'. ຫາກທ່ານມີຂໍ້ສົງໄສ, ພວກເຮົາຂໍແນະນຳໃຫ້ທ່ານຕິດຕໍ່ສອບຖາມຂໍ້ມູນເພີ່ມເຕີມໄດ້ທີ່ໜ່ວຍງານປະສານງານຂອງ ກອງທຶນສມົທົບ ເພື່ອຂໍຄຳແນະນຳເພີ່ມຕື່ມ.

## 2.3 ແຫຼ່ງທຶນສຳລັບການລົງທຶນ

ຖ້າຫາກການສະໝັກຂອງທ່ານໄດ້ຮັບການອະນຸມັດຈາກ ຄະນະກຳມະການບໍລິຫານກອງທຶນສົມທົບ ແລະ ໄດ້ຮັບການຄັດເລືອກໃຫ້ເປັນຜູ້ຮັບທຶນ, ທາງໂຄງການຈະເບີກຈ່າຍທຶນຄືນໃຫ້ກໍຕໍ່ເມື່ອທ່ານໄດ້ຊຳລະມູນຄ່າການລົງທຶນນັ້ນໄປກ່ອນແລ້ວ. ນັ້ນໝາຍຄວາມວ່າທ່ານໃນນາມຫົວໜ່ວຍທຸລະກິດກະສິກຳ ຈະຕ້ອງມີທຶນພຽງພໍເພື່ອຊຳລະໃຫ້ແກ່ການລົງທຶນທັງໝົດລ່ວງໜ້າ. ຄຳຖາມນີ້ ແມ່ນເພື່ອໃຫ້ພວກເຮົາໝັ້ນໃຈວ່າ ທ່ານມີງົບປະມານພຽງພໍແທ້ ຫຼື ມີຄວາມຈຳເປັນທີ່ຈະຕ້ອງໄດ້ຈັດຫາແຫຼ່ງທຶນເພີ່ມເຕີມຈາກພາຍນອກ (ເຊັ່ນ: ກູ້ຢືມຈາກທະນາຄານ). ກະລຸນາລະບຸຈຳນວນເງິນທຶນຕົວຈິງ ທີ່ທ່ານມີຄວາມພ້ອມແລ້ວສຳລັບການລົງທຶນ ເປັນສະກຸນເງິນ (ກີບ)

# II. ບົດສະເໜີການລົງທຶນ / ໂຄງການ

## 2.4 ການສະເໜີຂໍທຶນຊ່ວຍເຫຼືອ

ກະລຸນາລະບຸຍອດລວມຂອງທຶນຊ່ວຍເຫຼືອລ້າ ທີ່ທ່ານຕ້ອງການສະເໜີຂໍເປັນສະກຸນເງິນກີບ (ກີບ). ຈຳນວນເງິນດັ່ງກ່າວ ຈະຕ້ອງບໍ່ເກີນ 50% ຂອງຍອດລວມງົບປະມານທັງໝົດ ສຳລັບການລົງທຶນໃນຄັ້ງນີ້.

## 2.5 ຜົນກະທົບໃນການດຳເນີນງານ ກ່ຽວກັບດ້ານຜະລິດຕະພັນ, ຕະຫຼາດ ແລະ ລູກຄ້າ

ການລົງທຶນໃດໜຶ່ງ ມັກຈະນຳໄປສູ່ການປ່ຽນແປງໃນຂະບວນການດຳເນີນງານຫຼັກຂອງທຸລະກິດ. ການຜະລິດ ຜະລິດຕະພັນ ຫຼື ສິນຄ້າໃໝ່ອອກມາ ອາດຈະມີຕະຫຼາດ ຫຼື ກຸ່ມຜູ້ຊື້ທີ່ແຕກຕ່າງໄປຈາກເດີມ, ລວມທັງຕ້ອງໄດ້ປະຕິບັດຕາມລະບຽບການໃໝ່ໆ. ນອກຈາກນັ້ນ, ອາດຈະມີການອອກແບບ ຮູບແບບການຕະຫຼາດ ແລະ ການບໍລິການຈັດສົ່ງໃໝ່ ຊຶ່ງອາດຕ້ອງໄດ້ນຳໃຊ້ຮູບແບບການຈັດສົ່ງ, ການຂົນສົ່ງ ແລະ ການຊຳລະເງິນທີ່ແຕກຕ່າງໄປຈາກເກົ່າ. ກະລຸນາພັນລະນາຕາມຄວາມເຂົ້າໃຈຂອງທ່ານ ກ່ຽວກັບການປ່ຽນແປງທີ່ສຳຄັນໃນການດຳເນີນງານທຸລະກິດຂອງທ່ານ ທີ່ຈະເກີດຂຶ້ນຈາກແຜນການລົງທຶນໃນຄັ້ງນີ້.

## 2.6 ຜົນກະທົບຕໍ່ປັດໄຈການຜະລິດທີ່ຈຳເປັນ

ຕົວຢ່າງ: ຫາກການລົງທຶນນຳໄປສູ່ການຂະຫຍາຍກຳລັງການຜະລິດ, ສິ່ງນີ້ອາດສົ່ງຜົນໃຫ້ມີຄວາມຕ້ອງການຜົນຜະລິດກະສິກຳຈາກຊາວກະສິກອນເພື່ອມາເປັນປັດໄຈການຜະລິດໃນປະລິມານທີ່ເພີ່ມຂຶ້ນ. ອີກຕົວຢ່າງໜຶ່ງ, ໃນກໍລະນີທີ່ມີການລົງທຶນເພື່ອເພີ່ມຂັ້ນຕອນການປຸງແຕ່ງໃຫ້ເລິກເຊິ່ງຂຶ້ນ, ທຸລະກິດຂອງທ່ານອາດມີຄວາມຕ້ອງການຜົນຜະລິດທີ່ຜ່ານການກະກຽມເບື້ອງຕົ້ນຈາກຊາວກະສິກອນ, ເປັນຕົ້ນແມ່ນ ການປອກເປືອກ, ການຕາກແຫ້ງ ຫຼື ການຕັດແຕ່ງ. ກະລຸນາພັນລະນາຕາມທັດສະນະຂອງທ່ານ ກ່ຽວກັບການປ່ຽນແປງທາງດ້ານປະລິມານ, ຄຸນນະພາບ ຫຼື ຄວາມຕໍ່ເນື່ອງຂອງຄວາມຕ້ອງການຜົນຜະລິດ ແລະ ປັດໄຈການຜະລິດຈາກຊາວກະສິກອນ.

## 2.7 ຜົນກະທົບຕໍ່ລະບົບຕ່ອງໂສ້ມູນຄ່າ ສິນຄ້າກະສິກຳ ທີ່ຢູ່ໃນບັນຊີຂາວ (WHITELIST)

ຈຸດປະສົງແມ່ນເພື່ອໃຫ້ທ່ານພັນລະນາວ່າ ແຜນການລົງທຶນດັ່ງກ່າວ ຈະສ້າງຜົນກະທົບທາງບວກຕໍ່ຫ່ວງໂສ້ມູນຄ່າກະສິກຳທີ່ນອນໃນບັນຊີຂາວ (Whitelist) ແນວໃດ, ການມີສ່ວນຮ່ວມໃນການສ້າງສາຍພົວພັນທາງດ້ານການຄ້າທີ່ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດຮ່ວມກັບຊາວກະສິກອນ, ແລະ ການຊຸກຍູ້ການຜະລິດກະສິກຳທີ່ມີຄວາມຍືນຍົງທາງດ້ານສິ່ງແວດລ້ອມ, ປາສະຈາກການທຳລາຍປ່າ ຫຼື ການມີສ່ວນຮ່ວມໃນການຫຼຸດຜ່ອນການເຊື່ອມໂຊມຂອງປ່າໄມ້, ການທຳລາຍປ່າ ແລະ ການປ່ອຍອາຍພິດເຮືອນແກ້ວ (GHG). ກະລຸນາອະທິບາຍຕື່ມວ່າ ການລົງທຶນນີ້ຈະມີສ່ວນຮ່ວມ ຫຼື ສົ່ງຜົນຕໍ່ການປ່ຽນແປງການນຳໃຊ້ທີ່ດິນ, ການສູນເສຍຄວາມຫຼາກຫຼາຍທາງຊີວະນາໆພັນ ຫຼື ຜົນກະທົບອື່ນໆ ທາງດ້ານສິ່ງແວດລ້ອມ ແລະ ສັງຄົມຄືແນວໃດ. ສຸດທ້າຍ, ກະລຸນາລະບຸຈຳນວນຄົວເຮືອນຊາວກະສິກອນ ແລະ ເນື້ອທີ່ດິນ (ເຮັກຕາ) ທີ່ຈະມີສ່ວນຮ່ວມໃນການເຮັດກະສິກຳທີ່ມີຄວາມຍືນຍົງ ແລະ ປາສະຈາກການທຳລາຍປ່າທີ່ກ່ຽວຂ້ອງກັບການລົງທຶນຂອງທ່ານ.

# II. ບົດສະເໜີການລົງທຶນ / ໂຄງການ

## 2.8 ການຄາດຄະເນທາງດ້ານການເງິນ

ການລົງທຶນ ຄວນຈະສ້າງຜົນກະທົບທາງບວກໃຫ້ແກ່ຜົນໄດ້ຮັບທາງດ້ານການເງິນຂອງຫົວໜ່ວຍທຸລະກິດກະສິກຳ. ກະລຸນາພັນລະນາການປ່ຽນແປງລາຍຮັບ, ລາຍຈ່າຍ ແລະ ຄ່າຫຼຸ້ຍຫ້ຽນຂອງຊັບສິນ ທີ່ທ່ານຄາດວ່າຈະເກີດຂຶ້ນຈາກຜົນຂອງການລົງທຶນ ຢ່າງໜ້ອຍໃນໄລຍະ 24 ເດືອນທຳອິດ. ສິ່ງທີ່ພວກເຮົາໃຫ້ຄວາມສົນໃຈເປັນພິເສດ ແມ່ນບົດວິເຄາະທີ່ເປັນພື້ນຖານໃຫ້ແກ່ການຄາດຄະເນການປ່ຽນແປງຂອງລາຍຮັບ ແລະ ລາຍຈ່າຍ, ລວມທັງສົມມຸດຕິຖານຕ່າງໆ ທີ່ນຳໃຊ້ເຂົ້າໃນການວິເຄາະດັ່ງກ່າວ. ຕົວຢ່າງ: ຂໍ້ມູນນີ້ອາດກ່ຽວຂ້ອງກັບ (ການເພີ່ມຂຶ້ນ) ຂອງຈຳນວນ ແລະ (ການສູງຂຶ້ນ) ຂອງລາຄາສິນຄ້າທີ່ຂາຍອອກ, ຫຼື ຄວາມເປັນໄປໄດ້ໃນການຫຼຸດຜ່ອນຕົ້ນທຶນ, ຕະຫຼອດຮອດປັດໄຈຕ່າງໆ ທີ່ຈຳເປັນເພື່ອໃຫ້ບັນລຸຜົນປະໂຫຍດເຫຼົ່ານັ້ນ.

## 2.9 ຄວາມສ່ຽງ ແລະ ມາດຕະການຫຼຸດຜ່ອນ

ກະລຸນາພັນລະນາບັນດາຄວາມສ່ຽງຕ່າງໆ ທີ່ທ່ານເຫັນວ່າອາດຈະສົ່ງຜົນກະທົບຕໍ່ຄວາມເປັນໄປໄດ້ໃນການຈັດຕັ້ງປະຕິບັດການລົງທຶນ ແລະ ຜົນໄດ້ຮັບທີ່ຄາດໄວ້ສຳລັບຫົວໜ່ວຍທຸລະກິດກະສິກຳຂອງທ່ານ (ຖ້າມີ). ສຳລັບແຕ່ລະປັດໄຈຄວາມສ່ຽງ, ກະລຸນາລະບຸວິທີການທີ່ທ່ານຈະນຳໃຊ້ ເພື່ອລຸດຜ່ອນຄວາມສ່ຽງດັ່ງກ່າວ. ໂດຍທ່ານສາມາດຕັ້ງຄຳຖາມເພື່ອວິເຄາະຫາຂໍ້ມູນ ດັ່ງນີ້: 1. ມີສິ່ງໃດແດ່ທີ່ອາດຈະຜິດພາດ ຫຼື ກາຍເປັນບັນຫາ (ຄວາມສ່ຽງ); 2. ທ່ານຈະມີມາດຕະການແນວໃດ ເພື່ອປ້ອງກັນບໍ່ໃຫ້ບັນຫາດັ່ງກ່າວເກີດຂຶ້ນ; 3. ທ່ານຈະມີມາດຕະການແກ້ໄຂແນວໃດ ຫາກມີບັນຫາເກີດຂຶ້ນ (ມາດຕະການຫຼຸດຜ່ອນ).

## 2.10 ໄລຍະເວລາການລົງທຶນ

ກະລຸນາລະບຸຂັ້ນຕອນ, ກິດຈະກຳ ແລະ ກອບເວລາຕົວຈິງ ທີ່ທ່ານຄາດວ່າຈະນຳໃຊ້ເຂົ້າໃນການກະກຽມ, ການຈັດຊື້-ຈັດຈ້າງ ແລະ ການເລີ່ມດຳເນີນງານຕົວຈິງຂອງການລົງທຶນ ໃຫ້ລະອຽດທີ່ສຸດເທົ່າທີ່ຈະເຮັດໄດ້ ໂດຍນຳໃຊ້ແບບຟອມກອບເວລາການລົງທຶນ (Investment Timeline) ທີ່ໄດ້ສະໜອງໃຫ້. ທັງນີ້, ເນື່ອງຈາກຂັ້ນຕອນຕ່າງໆ ອາດຕ້ອງໃຊ້ເວລາພໍສົມຄວນ ນັບຕັ້ງແຕ່ການເກັບກຳຂໍ້ມູນ ແລະ ໃບສະເໜີລາຄາ, ການຈັດຊື້, ການຈັດສົ່ງ, ການຕິດຕັ້ງ, ການເລີ່ມນຳໃຊ້ຄັ້ງທຳອິດ ຈົນໄປເຖິງຂັ້ນຕອນການຂາຍຜະລິດຕະພັນໃໝ່ໃນຊຸດທຳອິດ.

## 2.11 ຄວາມຕ້ອງການໃນການສ້າງຂີດຄວາມສາມາດ

ດັ່ງທີ່ທ່ານໄດ້ຊາບແລ້ວວ່າ, ໂຄງການມີການສະໜອງການຊ່ວຍເຫຼືອທາງດ້ານເຕັກນິກໂດຍບໍ່ເສຍຄ່າ ໃຫ້ແກ່ບັນດາຫົວໜ່ວຍທຸລະກິດກະສິກຳ ທີ່ຈະໄດ້ຮັບການຄັດເລືອກໃຫ້ຮັບທຶນສົມທົບຈາກ ກອງທຶນສົມທົບ. ການຊ່ວຍເຫຼືອດັ່ງກ່າວ ແມ່ນຈະເນັ້ນໃສ່ຄວາມຕ້ອງການໃນການສ້າງຂີດຄວາມສາມາດສະເພາະດ້ານຂອງຜູ້ຮັບທຶນ. ດ້ວຍເຫດນັ້ນ, ພວກເຮົາຈຶ່ງຂໍຄວາມຮ່ວມມືຈາກທ່ານ ໃນການປະເມີນຕົນເອງຢ່າງລະອຽດ ແລະ ຕາມຄວາມເປັນຈິງ ກ່ຽວກັບຂີດຄວາມສາມາດທີ່ທ່ານເຫັນວ່າ ທຸລະກິດກະສິກຳຂອງທ່ານຈຳເປັນຕ້ອງໄດ້ຮັບການພັດທະນາຫຼາຍທີ່ສຸດ ເພື່ອໃຫ້ບັນລຸຜົນສຳເລັດ. ກະລຸນາພັນລະນາເຖິງຄວາມຕ້ອງການໃນການສ້າງຂີດຄວາມສາມາດເຫຼົ່ານັ້ນ ລວມທັງວິທີການທີ່ທ່ານເຫັນວ່າມີປະສິດທິຜົນທີ່ສຸດ ໃນການຈັດຕັ້ງປະຕິບັດມາດຕະການສ້າງຂີດຄວາມສາມາດດັ່ງກ່າວ ຕາມທັດສະນະຂອງທ່ານ.

# II. ບົດສະເໜີການລົງທຶນ / ໂຄງການ

## 2.12 ການສ້າງຂີດຄວາມສາມາດພຽງຢ່າງດຽວ

ມີຄວາມເປັນໄປໄດ້ສະເໜີວ່າ ບົດສະເໜີຂໍທຶນສົມທົບຊ່ວຍເຫຼືອລ້າຂອງທ່ານ ອາດຈະບໍ່ໄດ້ຮັບການຄັດເລືອກ. ໃນກໍລະນີດັ່ງກ່າວ, ທ່ານຍັງມີຄວາມສົນໃຈທີ່ຈະຮັບການຊ່ວຍເຫຼືອທາງດ້ານເຕັກນິກ ແລະ ການສະໜັບສະໜູນດ້ານການພັດທະນາທຸລະກິດ ທີ່ທາງໂຄງການຈັດຫາໃຫ້ໂດຍບໍ່ເສຍຄ່າຫຼືບໍ່ ?

## 2.13 ເງື່ອນໄຂຕ່າງໆ

ພາກສ່ວນນີ້ປະກອບດ້ວຍບັນດາເງື່ອນໄຂຕ່າງໆ ສໍາລັບຜູ້ສະໝັກ ແລະ ຜູ້ຮັບທຶນຈາກ ກອງທຶນສົ່ງເສີມທຸລະກິດກະສິກໍາ. ກະລຸນາທົບທວນແຕ່ລະເງື່ອນໄຂຢ່າງລະອຽດ ແລະ ໝາຍຕິກໃສ່ຫ້ອງວ່າງ ໃນກໍລະນີທີ່ທ່ານຍອມຮັບ ແລະ ເຫັນດີຕາມເງື່ອນໄຂດັ່ງກ່າວ.

